german cooperation
DEUTSCHE ZUSAMMENARBEIT

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

GRAND DUCHY OF LUXEMBOURG

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ໂຄງການ ປັບປຸງການຄຸ້ມຄອງທີ່ດິນ ໃນຂົງເຂດແມ່ນ້ຳຂອງ 3 (ILM-MR 3)

**ນະໂຍບາຍ ແລະ ການຄອບຄອງນຳໃຊ້ ກ່ຽວກັບທີ່ດິນ ໃນຂົງເຂດແມ່ນ້ຳຂອງ ກຳລັງຖືກປັບປຸງໃຫ້ດີຂຶ້ນ ເພື່ອໃຫ້ຊາວກະສິກອນຂະໜາດນ້ອຍ ມີຄວາມໝັ້ນຄົງ ໃນການຄອບຄອງນຳໃຊ້ທີ່ດິນ ແລະ ຄຸ້ມຄອງຊີວິດການເປັນຢູ່.**

## ຄວາມເປັນມາ

ສະພາບເສດຖະກິດ-ສັງຄົມ ທີ່ມີການພັດທະນາຢ່າງໄວວາໃນພາກພື້ນແມ່ນ້ຳຂອງໂດຍສະເພາະແມ່ນບັນດາປະເທດລຸ່ມແມ່ນ້ຳຂອງ, ເຊັ່ນ ກຳປູເຈຍ, ສປປ ລາວ ແລະ ຫວຽດນາມ, ເປັນສາເຫດໃຫ້ມີການປ່ຽນແປງຢ່າງຫຼວງຫຼາຍຕໍ່ກັບຮູບແບບການນຳໃຊ້ທີ່ດິນ ແລະ ໄດ້ສິ່ງຜົນກະທົບໃຫ້ແກ່ຊັບພະຍາກອນທຳມະຊາດຫຼາຍຂຶ້ນ. ເຖິງຢ່າງໃດກໍຕາມ, ການພັດທະນາເສດຖະກິດ-ສັງຄົມນີ້ບໍ່ໄດ້ເກີດຂຶ້ນຢ່າງທົ່ວເຖິງທຸກຂົງເຂດ, ຍັງມີເຂດຊົນນະບົດຫຼາຍແຫ່ງ, ໂດຍສະເພາະແມ່ນຊາວກະສິກອນຂະໜາດນ້ອຍບໍ່ໄດ້ຮັບຜົນປະໂຫຍດຈາກການພັດທະນາດັ່ງກ່າວ. ຊຸມຊົນເຫຼົ່ານີ້ມັກຈະພົບກັບສິ່ງທ້າທາຍໃນການປົກປ້ອງສິດຂອງຕົນໃນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນ, ເຊິ່ງມີຄວາມສຳຄັນຕໍ່ການດຳລົງຊີວິດຂອງພວກເຂົາ.

ກົດໝາຍ ແລະ ນະໂຍບາຍກ່ຽວກັບການຄຸ້ມຄອງທີ່ດິນໃນພາກພື້ນແມ່ນ້ຳຂອງໄດ້ເປີດໂອກາດໃຫ້ຊາວກະສິກອນຂະໜາດນ້ອຍ ປົກປ້ອງສິດຂອງຕົນໃນການນຳໃຊ້ ແລະ ເປັນເຈົ້າຂອງທີ່ດິນ. ເຖິງຢ່າງໃດກໍຕາມ, ລະບຽບການຕ່າງໆມັກຈະມີຄວາມຊັບຊ້ອນ ແລະ ມີຊ່ອງວ່າງ ຫຼື ບາງຄັ້ງກໍຍັງມີມາດຕາທີ່ຂັດແຍ່ງກັນ. ໃນບາງກໍລະນີ, ລະບຽບ ແລະ ກົດໝາຍບໍ່ມີຄວາມສອດຄ່ອງກັນ ຫຼື ບໍ່ສາມາດບັງຄັບໃຊ້ໄດ້ດີເທົ່າທີ່ຄວນ ສິ່ງຜົນໃຫ້ມີການສໍ້ລາດບັງຫຼວງ ແລະ ການນຳໃຊ້ອຳນາດໜ້າທີ່ໃນທາງທີ່ຜິດ, ມີການຍຶດເອົາທີ່ດິນເປັນຈຳນວນຫຼວງຫຼາຍ, ມີການໄລ່ທີ່ ແລະ ການກົດກັນທາງສັງຄົມຕໍ່ຊາວກະສິກອນຂະໜາດນ້ອຍ ແລະ ກຸ່ມຜູ້ດ້ອຍໂອກາດອື່ນໆ.

ດ້ວຍເຫດນີ້, ໂຄງການ ປັບປຸງການຄຸ້ມຄອງທີ່ດິນໃນຂົງເຂດແມ່ນ້ຳຂອງ (ILM-MR 3) ຈຶ່ງສະໜັບສະໜູນການຊຸກຍູ້ບັນດານະໂຍບາຍ ແລະ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທີ່ດິນໃຫ້ດີຂຶ້ນ. ໂດຍສະເພາະແມ່ນເນັ້ນໜັກໃສ່ການສົ່ງເສີມການຮັບຮູ້ສິດຄອບຄອງນຳໃຊ້ ແລະ ການເປັນເຈົ້າຂອງທີ່ດິນຕາມປະເພນີ ແລະ ການຄຸ້ມຄອງການລົງທຶນດ້ານກະສິກຳຢ່າງມີຄວາມຮັບຜິດຊອບ ໃນ ກຳປູເຈຍ, ສປປ ລາວ ແລະ ຫວຽດນາມ.



*ການແກ້ໄຂຂໍ້ຂັດແຍ່ງທາງດ້ານທີ່ດິນ ໂດຍການນຳໃຊ້ແຜນທີ່ ສຳລັບໂຄງການເຊົ່າສຳປະທານການລົງທຶນ, ທີ່ເມືອງ ກາສີ, ແຂວງ ວຽງຈັນ.*

*ຮູບພາບໂດຍ : ©GIZ/ຂັນແກ້ວ ອຸປຣະວັນ*

| | |
|---|---|
| **ຊື່ໂຄງການ** | ໂຄງການ ປັບປຸງການຄຸ້ມຄອງທີ່ດິນໃນຂົງເຂດແມ່ນ້ຳຂອງ 3 (ILM-MR 3) |
| **ໃຫ້ທຶນໂດຍ** | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ເຢຍລະມັນ (BMZ) |
| **ສົມທົບທຶນໂດຍ** | ລັດຖະບານສະວິດເຊີແລນ ໂດຍຜ່ານ ອົງການເພື່ອການພັດທະນາ ແລະ ການຮ່ວມມືຂອງປະເທດສະວິດເຊີແລນ (SDC) ແລະ ລັດຖະບານລຸກຊຳບວກ |
| **ເຂດເປົ້າໝາຍຂອງໂຄງການ** | ກຳປູເຈຍ, ສປປ ລາວ, ຫວຽດນາມ |
| **ຄູ່ຮ່ວມງານໂຄງການ** | ອົງການ Land Equity International/GRET |
| **ໄລຍະເວລາ** | ມັງກອນ 2023 - ທັນວາ 2025 |

## ຈຸດປະສົງ

ກຸ່ມຊາວກະສິກອນຂະໜາດນ້ອຍມີການເຂົ້າເຖິງ ແລະ ຄວບຄຸມທີ່ດິນກະສິກຳ ແລະ ປ່າໄມ້ໄດ້ຢ່າງມີຄວາມໝັ້ນຄົງ ແລະ ສະເໝີພາບໃນເຂດພາກພື້ນແມ່ນ້ຳຂອງ.

## ວິທີການດຳເນີນງານ

ໂຄງການດັ່ງກ່າວ ແມ່ນການປະກອບສ່ວນເຂົ້າໃນໂຄງການບໍລິຫານລັດກ່ຽວກັບທີ່ດິນປະຈຳພາກພື້ນແມ່ນ້ຳຂອງ (MRLG). ໂຄງການ MRLG ແມ່ນໄດ້ຮັບທຶນຮ່ວມສະໜັບສະໜູນຈາກ ລັດຖະບານສະວິດເຊີແລນ ໂດຍຜ່ານອົງການເພື່ອການພັດທະນາ ແລະ ການຮ່ວມມືຂອງປະເທດສະວິດເຊີແລນ (SDC) ແລະ ໄດ້ຮັບທຶນຮ່ວມເພີ່ມຕື່ມຈາກ ປະເທດເຢຍລະມັນ ແລະ ລັດຖະບານລຸກຊຳບວກ.

ໂຄງການ MRLG ມີເປົ້າໝາຍໃນການປະກອບສ່ວນເຂົ້າໃນການປັບປຸງບັນດານະໂຍບາຍ ແລະ ແນວທາງຈັດຕັ້ງປະຕິບັດວຽກງານ ກ່ຽວກັບຄວາມໝັ້ນຄົງໃນການຄອບຄອງນຳໃຊ້ທີ່ດິນສຳລັບຊາວກະສິກອນຂະໜາດນ້ອຍ ໂດຍຜ່ານການຮ່ວມມືກັບບັນດາຄູ່ຮ່ວມງານໂຄງການທີ່ປະກອບດ້ວຍບັນດາໜ່ວຍງານພາກ ລັດ, ອົງການຈັດຕັ້ງທາງສັງຄົມ ແລະ ສະຖາບັນການສຶກສາຕ່າງໆ. ບັນດາຄູ່ຮ່ວມງານແມ່ນໄດ້ຮັບການສະໜັບສະໜູນໃນການພັດທະນາບັນດາຂໍ້ສະເໜີແນະຕໍ່ກັບນະໂຍບາຍໂດຍມີຂໍ້ມູນຫຼັກຖານອ້າງອີງ, ຊຸກຍູ້ກອງປະຊຸມປຶກສາຫາລືດ້ານນະໂຍບາຍ ແລະ ທົດລອງເຄື່ອນໄຫວກິດຈະກຳໃນລະດັບຊຸມຊົນ.

ບັນດາຄູ່ຮ່ວມງານດັ່ງກ່າວແມ່ນປະຕິບັດງານ ຕາມແນວທາງທີ່ໄດ້ວາງໄວ້ທັງໃນລະດັບສູນ

ກາງ ແລະ ລະດັບພາກພື້ນ, ເພື່ອອຳນວຍຄວາມສະດວກໃນວຽກງານປັບປຸງນະໂຍບາຍ ແລະ ແນວທາງຈັດຕັ້ງປະຕິບັດ ຜ່ານ 2 ຂົງເຂດວຽກງານຄື:

- ສິດຄອບຄອງນຳໃຊ້ທີ່ດິນຕາມປະເພນີ
- ການລົງທຶນດ້ານກະສິກຳແບບມີຄວາມຮັບຜິດຊອບ (RAI)

ສ່ວນຫຼາຍ, ການປະກອບສ່ວນດ້ານການປັບປັງນະໂຍບາຍແມ່ນແນ່ໃສ່ ການປັບປຸງດ້ານກົດໝາຍ, ດຳລັດ ແລະ ກົນໄກການນຳໃຊ້ກົດລະບຽບຕ່າງໆ. ໃນກໍລະນີທີ່ນະໂຍບາຍ ແລະ ການຈັດຕັ້ງປະຕິບັດຕົວຈິງບໍ່ສອດຄ່ອງກັນ, ການປະກອບສ່ວນແມ່ນຈະແນ່ໃສ່ການຈັດຕັ້ງປະຕິບັດເພື່ອປັບປຸງດ້ານນະໂຍບາຍໃຫ້ມີປະສິດທິພາບຢູ່ໃນລະດັບການປົກຄອງຂັ້ນທ້ອງຖິ່ນ ແລະ ເສີມສ້າງໃຫ້ຊຸມຊົນເຂົ້າໃຈ ສິດ ແລະ ວິທີການປົກປ້ອງສິດຂອງຕົນ.

## ສິ່ງທີ່ພວກເຮົາບັນລຸ

ໄລຍະທີສາມຂອງໂຄງການ ແມ່ນໄດ້ເລີ່ມໃນເດືອນ ມັງກອນ 2023 ແລະ ໄດ້ສ້າງຂຶ້ນບົນພື້ນຖານຄວາມສຳເລັດຈາກໄລຍະທຳອິດ ແລະ ໄລຍະທີສອງຂອງໂຄງການ.

ສຳລັບຂົງເຂດວຽກງານຮັບຮູ້ສິດຄອບຄອງນຳໃຊ້ທີ່ດິນຕາມປະເພນີ, ໄດ້ມີການທົດລອງນຳໃຊ້ວິທີການຕ່າງໆສຳລັບການສ້າງແຜນທີ່ຊຸມຊົນ, ການວາງແຜນນຳໃຊ້ທີ່ດິນ, ການແກ້ໄຂຂໍ້ຂັດແຍງ ແລະ ການສຳຫຼວດ ທີ່ດິນຢູ່ ສປປ ລາວ, ກຳປູເຈຍ ແລະ ຫວຽດນາມ. ວຽກງານດັ່ງກ່າວໄດ້ສ້າງຜົນປະໂຫຍດໂດຍກົງໃຫ້ແກ່ 80 ຊຸມຊົນໃນເຂດຊົນນະບົດ (ກວມເອົາຫຼາຍກວ່າ 70.000 ຄົນ). ນອກຈາກນັ້ນ, ຢູ່ ສປປ ລາວ, ຍັງມີການສະໜັບສະໜູນການປັບປຸງນະໂຍບາຍກ່ຽວການຮັບຮູ້ສິດຄອບຄອງ ນຳໃຊ້ຕາມປະເພນີໃນ 3 ປະເພດປ່າ. ຢູ່ຫວຽດນາມມີການສະໜັບສະໜູນການພັດທະນາປື້ມຄູ່ມືທາງການ ກ່ຽວກັບການຄຸ້ມຄອງປ່າໄມ້ ຊຸມຊົນ ແລະ ໃນລະດັບພາກພື້ນໄດ້ມີການຮັບຮອງເອົາຄູ່ມືອາຊຽນກ່ຽວກັບການຮັບຮູ້ສິດຄອບຄອງນຳໃຊ້ຕາມປະເພນີໃນເຂດພູມສັນຖານປ່າໄມ້ ຢ່າງເປັນທາງການ ໃນເດືອນຕຸລາ 2022.

ໃນຂົງເຂດວຽກງານການລົງທຶນດ້ານກະສິກຳແບບມີຄວາມຮັບຜິດຊອບ (R A I), ໂຄງການໄດ້ສ້າງຊຸດເຄື່ອງມືກ່ຽວກັບການຄຸ້ມຄອງຂໍ້ມູນທີ່ຜ່ານການຄົ້ນຄວ້າເຊັ່ນ: ຮູບແບບການລົງທຶນດ້ານກະສິກຳທີ່ແຕກຕ່າງກັນ ແລະ ຜົນກະທົບຂອງແຕ່ລະຮູບແບບຕໍ່ຊາວກະສິກອນຂະໜາດນ້ອຍ. ໂດຍສະເພາະແລ້ວ, ໂຄງການໄດ້ຮ່ວມມືກັບນັກລົງທຶນເອກະຊົນ, ເຮັດໃຫ້ສາມາດເຊື່ອມສານມາດຕະຖານການລົງທຶນດ້ານກະສິກຳແບບມີຄວາມຮັບຜິດຊອບ ໄດ້ 7 ມາດຕະຖານເຂົ້າໃນການຈັດຕັ້ງປະຕິບັດວຽກງານຂອງພວກເຂົາ.

ການຈັດຕັ້ງປະຕິບັດໂຄງການໄລຍະສາມນີ້ ແມ່ນການເສີມຂະຫຍາຍວຽກງານຈາກຜົນງານທີ່ໄດ້ກ່າວມາຂ້າງເທິງນີ້ ພ້ອມກັບ ສົ່ງເສີມ ແລະ ເກັບກຳຂັ້ນຕອນການປັບປຸງ ແລະ ປ່ຽນແປງທີ່ກຳລັງດຳເນີນການຢູ່.

ສຳລັບ ສປປ ລາວ, ພາຍໃຕ້ການສະໜັບສະໜູນຈາກ BMZ ຕັ້ງແຕ່ເດືອນມັງກອນ ປີ 2024 ເປັນຕົ້ນມາ, ໂຄງການ ILM-MR ໄດ້ມີການປະສານສົມທົບຢ່າງໃກ້ຊິດ ກັບກະຊວງແຜນການ ແລະ ການລົງທຶນ, ພ້ອມດ້ວຍພະແນກການຂັ້ນແຂວງ ແລະ ເມືອງເພື່ອສົ່ງເສີມວຽກງານ ການສົ່ງເສີມຄວາມໝັ້ນຄົງດ້ານການຄອບຄອງນຳໃຊ້ທີ່ດິນ ເຂົ້າໃນການລົງທຶນ, ການສ້າງສັນຍາກະສິກຳ, ການເຊົ່າທີ່ດິນ, ແລະ ການຈັດຕັ້ງປະຕິບັດການເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC) ເຂົ້າໃນກິດຈະກຳການລົງທຶນ. ໃນປະຈຸບັນມີ 13 ບໍລິສັດ ທີ່ມີສ່ວນຮ່ວມຢ່າງຫ້າວຫັນໃນການຈັດຕັ້ງປະຕິບັດ ທີ່ສອດຄ່ອງກັບຫຼັກການການລົງທຶນກະສິກຳຢ່າງມີຄວາມຮັບຜິດຊອບ (RAI).

## ບົດບາດຍິງ-ຊາຍ ແລະ ວຽກງານການຄຸ້ມຄອງທີ່ດິນ

ຄວາມສຳພັນລະຫວ່າງ ການປັບປຸງສິດໃນທີ່ດິນຂອງແມ່ຍິງ ແລະ ການຫຼຸດຜ່ອນຄວາມທຸກຍາກຍັງເປັນບັນຫາຫລັກໃນຂະແໜງການນີ້. ແມ່ຍິງ ມັກຈະພົບພໍ້ກັບການຈຳແນກໃນລະບົບການຄອງຄອງທີ່ດິນຕາມປະເພນີ ແລະ ແບບທາງການ.

ອົງປະກອບທີ່ສຳຄັນໃນການຮັບປະກັນການຄອບຄອງທີ່ດິນ ສຳລັບກຸ່ມຊາວກະສິກອນຂະໜາດນ້ອຍ ແລະ ປະຊາຊົນບັນດາເຜົ່າໃນພາກພື້ນ ແມ່ນການຮັບປະກັນວ່າແມ່ຍິງມີສິດໃນທີ່ດິນທີ່ໝັ້ນຄົງ ແລະ ສະເໝີພາບ.

ເພື່ອແກ້ໄຂສະພາບການດັ່ງກ່າວ, ບັນດາກິດຈະກຳສ່ວນໃຫຍ່ທີ່ໄດ້ທຶນສະໜັບສະໜູນຈາກໂຄງການແມ່ນສຸມໃສ່ຜູ້ທຸກຍາກ ແລະ ກຸ່ມຜູ້ດ້ອຍໂອກາດ, ເຊິ່ງໄດ້ລວມເອົາກຸ່ມແມ່ຍິງເຂົ້າໃນວຽກງານນີ້ດ້ວຍ.



*ກິດຈະກຳປູກຝັງ ແລະ ລ້ຽງສັດຂະໜາດນ້ອຍຢູ່ແຂວງຊຽງຂວາງ*
*ຮູບພາບໂດຍ: ©GIZ/ ບາດ ເວີເວຈ໌*

**ກ່ຽວກັບ GIZ ລາວ**

GIZ, ໃນນາມເປັນສ່ວນໜຶ່ງຂອງການຮ່ວມມື ເຢຍລະມັນ ເພື່ອການພັດທະນາ, ໄດ້ເຄື່ອນໄຫວວຽກງານຢູ່ ສປປ ລາວ ແຕ່ປີ 1993 ຕາງໜ້າໃຫ້ກະຊວງການຮ່ວມ ມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ເຢຍລະມັນ (BMZ) ພ້ອມກັບບັນດາຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາ. ໃນປັດຈຸບັນ, GIZ ກຳລັງ ສະໜັບສະໜູນບັນດາໂຄງການໃນ 4 ຂົງເຂດບູລິມະສິດຄື: ກ) ການພັດທະນາ ຊົນນະບົດ, ຂ) ການອະນຸລັກຮັກສາທຳມະຊາດ ແລະ ຊັບພະຍາກອນທຳມະຊາດ ແລະ ຄ) ການພັດທະນາເສດຖະກິດແບບຍືນຍົງ ແລະ ງ) ວຽກງານການປົກຄອງທີ່ດີ.

ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເຂົ້າເບິ່ງທີ່ເວບໄຊ www.giz.de/laos


| | |
|---|---|
| ຈັດພິມໂດຍ | **Deutsche Gesellschaft für Internationale Zusammenarbeit (GIZ) GmbH** |
| | **ສຳນັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ** |
| | **ໂຄງການ ປັບປຸງການຄຸ້ມຄອງທີ່ດິນ ໃນຂົງເຂດແມ່ນ້ຳຂອງ 3 (ILM-MR 3)** |
| | **ເຮືອນເລກທີ 179, ໜ່ວຍ 15, ບ້ານ ສີຖານ ເໜືອ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ,!<br>ໂທ +856 21 316 570<br>I: www.giz.de/laos (EN); www.giz.de/laos-la( LA)** |
| ລົງວັນທີ | **ກັນຍາ 2024** |
| ອອກແບບໂດຍ | **ໜ່ວຍງານຂໍ້ມູນຂ່າວສານ, ຫ້ອງການ GIZ ປະຈຳ ສປປ ລາວ, ນະຄອນຫຼວງວຽງຈັນ** |

| | |
|---|---|
| ຮູບຖ່າຍໂດຍ | **GIZ/ບາດ ເວີເວຈ໌, ທ່ານນາງ ຂັນແກ້ວ ອຸປຣະວັນ** |
| ຮຽບຮຽງໂດຍ | **ທ່ານນາງ ແອນເນັດຕ໌ ຊຣາມ** |
| ຕິດຕໍ່ | **ທ່ານນາງ ແອນເນັດຕ໌ ຊຣາມ<br>(annett.schramm@giz.de)** |
| | **ຫ້ອງການ GIZ ຈະເປັນຜູ້ຮັບຜິດຊອບຕໍ່ເນື້ອໃນສິ່ງພິມດັ່ງກ່າວ** |
| ຕາງໜ້າໃຫ້ | **ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນເຢຍລະມັນ (BMZ)** |
| ເວັບໄຊທີ່<br>ກ່ຽວຂ້ອງອື່ນໆ | **https://www.mrlg.org/laos/** |